ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

<u>ສຳນັກງານນາຍົກລັດຖະມົນຕີ</u>　　　　　　　　　　　　　　　　　　　　　ເລກທີ ...27...../ນຍ

ນະຄອນຫລວງວຽງຈັນ, ວັນທີ ...8-02-2006

# ດຳລັດ

## ວ່າດ້ວຍ ການກຳນົດເຂດປ່າຜະລິດແຫ່ງຊາດ ຈຳນວນ 8 ເຂດ ໃນ 4 ແຂວງ ຂອງໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດ

---------------

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ ປ ປ ລາວ ສະບັບ ເລກທີ 02/03/ສພຊ, ລົງວັນ ທີ 06/05/2003.
- ອີງຕາມ ກົດໝາຍປ່າໄມ້ ສະບັບ ເລກທີ 01-96, ລົງວັນທີ 11/10/1996.
- ອີງຕາມ ເອກະສານສະເໜີ ຂອງທ່ານລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ສະບັບເລກທີ 0014/ກປ.06, ລົງວັນທີ 11/01/2006.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1:** ຮັບຮອງເອົາເຂດປ່າຜະລິດຈຳນວນ 8 ເຂດ ໃນ 4 ແຂວງ ຂອງໂຄງການ ຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດ ຄື: ແຂວງ ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ ກຳນົດ ເປັນເຂດປ່າຜະລິດແຫ່ງຊາດ ລະອຽດມີດັ່ງນີ້:

| ລ/ດ | ຊື່ປ່າຜະລິດ | ເນື້ອທີ່ ( ເຮັກຕາ ) | ທີ່ຕັ້ງ ( ແຂວງ ) | ຂອບເຂດ ທີ່ຕັ້ງ | |
|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ |
| 1. | ດົງພູຊອຍ | 147.406 | ຄຳມ່ວນ | 105°01'00"-105°34'00" | 17°02'30"-17°22'30" |
| 2. | ນາກະທັງ-ໜອງກະປາດ | 105.416 | ຄຳມ່ວນ | 105°26'25"-106°27'15" | 17°02'00"-17°20'00" |

| | | | | | |
|---|---|---|---|---|---|
| 3. | ດົງກະເພາະ | 51.650 | ສະຫວັນນະເຂດ | 105°39'00"-105°58'00" | 16°20'00"-16°43'00" |
| 4. | ດົງສີທອນ | 150.900 | ສະຫວັນນະເຂດ | 105°16'00"-106°07'00" | 15°59'30"-16°16'30" |
| 5. | ສີລີວັງເວີນ | 37.590 | ຈຳປາສັກ | 105°48'25"-106°05'30" | 15°15'30"-15°27'15" |
| 6. | ປະທຸມພອນ | 27.043 | ຈຳປາສັກ | 105°56'00"-106°12'30" | 14°41'25"-14°54'10" |
| 7. | ເລົ່າງາມ | 74.580 | ສາລະວັນ | 105°49'45"-106°15'45" | 15°26'30"-15°43'15" |
| 8. | ພູຕາດລະອາ | 61.772 | ສາລະວັນ | 105°51'30"-106°12'45" | 15°28'15"-15°43'15" |
| | *ລວມ:* | *656.357* | | | |

**ມາດຕາ 2:** ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງດຳເນີນການສຳຫລວດ, ວາງແຜນ ແລະຄຸ້ມຄອງແບບຍືນນານໃຫ້ໄດ້ຮັບຜົນດີ.

**ມາດຕາ 3:** ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫລວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4:** ດຳລັດສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★

**ບຸນຍັງ ວໍລະຈິດ**